ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 02518 /ກພສ
ນະຄອນຫລວງວຽງຈັນ, ວັນທີ 21 MAY 2018

# ຄຳແນະນຳ
## ວ່າດ້ວຍການຄຸ້ມຄອງການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນໍ້າມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ

---

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011, ແລະ ສະບັບປັບປຸງ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບປັບປຸງ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.
- ອີງຕາມ ຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017, ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງ ກົມພາສີ.
- ອີງຕາມ ຄຳແນະນຳຂອງ ກະຊວງການເງິນ ສະບັບເລກທີ 2560/ກງ, ລົງວັນທີ 09 ສິງຫາ 2016 ວ່າດ້ວຍການປະຕິບັດນະໂຍບາຍພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ຂອງແຜນງານ/ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫລືອລ້າຈາກຕ່າງປະເທດ.

### ກົມພາສີ ອອກຄຳແນະນຳ :

**I. ຈຸດປະສົງ :**

ຄຳແນະນຳສະບັບນີ້ ແມ່ນເພື່ອກຳນົດຫລັກການ, ລະບຽບການ ແລະ ວິທີການໃນການຄຸ້ມຄອງການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນໍ້າມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີ ຫຼຸດຜ່ອນ ເພື່ອເຮັດໃຫ້ມີຂັ້ນຕອນປະກອບເອກະສານກະທັດຮັດ ດ້ວຍການນຳໃຊ້ລະບົບການຄຸ້ມຄອງແຜນຂອງພາສີ ແນໃສ່ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກແກ່ຜູ້ນຳເຂົ້າ, ຫຼຸດຜ່ອນການດຳເນີນຂັ້ນຕອນ ບໍ່ໃຫ້ມີລັກສະນະຊໍ້າຊ້ອນກັນພາຍໃນລັດຖະການພາສີ ໂດຍກຳນົດຂອບເຂດສິດ, ໜ້າທີ່ຄວາມຮັບຜິດຊອບ ລະຫ່ວາງ ກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ແລະ ດ່ານພາສີຊາຍແດນ ໃນການຄຸ້ມຄອງ, ຕິດຕາມ, ກວດກາທາງດ້ານເອກະສານ, ການນຳເຂົ້າ-ສົ່ງອອກ ແລະ ການເຄື່ອນຍ້າຍພາຍໃນ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**II. ຫຼັກການ :**

ຄຳແນະນຳ ສະບັບນີ້ແມ່ນເພື່ອກຳນົດຫຼັກການ ແລະ ຂອບເຂດສິດຂອງລັດຖະການພາສີແຕ່ລະຂັ້ນ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໃນການຄົ້ນຄວ້ານະໂຍບາຍດ້ານພາສີ-ອາກອນ ຂອງບັນດາໂຄງການສົ່ງເສີມການລົງທຶນຂັ້ນສູນກາງ ແລະ ທ້ອງຖິ່ນ, ການລົງທຶນໃນເຂດເສດຖະກິດພິເສດ, ໂຄງການລົງທຶນຂອງລັດ,

ໂຄງການນຳໃຊ້ທຶນ ກູ້ຢືມ-ຊ່ວຍເຫຼືອລ້າຈາກຕ່າງປະເທດ, ສະຖານທູດ-ອົງການຈັດຕັ້ງສາກົນ ແລະ ອື່ນໆ. ການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງແມ່ນ ກົມພາສີ (ພະແນກຄຸ້ມຄອງການຍົກເວັ້ນແລະງົດເກັບພາສີ) ຮັບຜິດຊອບ, ສຳລັບການລົງທຶນຢູ່ຂັ້ນທ້ອງຖິ່ນຂອງບັນດາແຂວງ ແມ່ນກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ເປັນຜູ້ຮັບຜິດຊອບ, ສ່ວນບັນດາດ່ານພາສີຊາຍແດນ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ຕາມລະບຽບການ.

**III. ບັນດາເອກະສານປະກອບໃນການຕິດຕາມການນຳເຂົ້າຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ**

ການນຳເຂົ້າວັດຖຸອຸປະກອນ, ກົນຈັກ, ພາຫະນະ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ ແມ່ນຢູ່ພາຍໃຕ້ການຄວບຄຸມ ຂອງລັດຖະການພາສີ ຕາມທີ່ໄດ້ກຳນົດໃນກົດໝາຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ພະຈິກ 2011. ໃນການຈັດຕັ້ງປະຕິບັດຕົວຈິງ ຕ້ອງໃຫ້ສອດຄ່ອງກັບບັນດາກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ສະເພາະ ເປັນຕົ້ນ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ດຳລັດນາຍົກລັດຖະມົນຕີ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ ຫຼື ເຂດອື່ນໆ, ລະບຽບການຄຸ້ມຄອງນຳໃຊ້ທຶນກູ້ຢືມ-ຊ່ວຍເຫຼືອລ້າຈາກຕ່າງປະເທດ ແລະ ກໍລະນີການໃຫ້ນະໂຍບາຍຂອງລັດຖະບານ ຊຶ່ງຕ້ອງໄດ້ປະຕິບັດເປັນແຕ່ລະກໍລະນີ, ຄື :

**3.1. ການນຳເຂົ້າສິນຄ້າ, ເຄື່ອງຂອງ ຕາມນະໂຍບາຍສົ່ງເສີມການລົງທຶນ :**

ການນຳເຂົ້າສິນຄ້າ, ເຄື່ອງຂອງ ໂຄງການຕາມນະໂຍບາຍສົ່ງເສີມການລົງທຶນ ຕ້ອງປະກອບເອກະສານ ຍື່ນຕໍ່ລັດຖະການພາສີ ເພື່ອພິຈາລະນາ, ຄື :

- ໃບສະເໜີຂອງວິສະຫະກິດລົງທຶນ ເຖິງລັດຖະການພາສີແຕ່ລະຂັ້ນ (ກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ) ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງ ທີ່ຈະນຳເຂົ້າຜ່ານບັນດາດ່ານພາສີຊາຍແດນ, ທີ່ຕັ້ງໂຄງການ, ເສັ້ນທາງຂົນສົ່ງ, ສາງເກັບມ້ຽນເຄື່ອງຂອງໂຄງການ ແລະ ການນຳໃຊ້ເຂົ້າໃນເປົ້າໝາຍໂຄງການ;
- ບົດວິພາກເສດຖະກິດຂອງວິສະຫະກິດ (ຍື່ນຄັ້ງດຽວ);
- ສັນຍາສຳປະທານ (ຖ້າມີ, ຍື່ນຄັ້ງດຽວ);
- ໃບທະບຽນວິສະຫະກິດ;
- ໃບຢັ້ງຢືນການມອບພັນທະອາກອນປະຈຳປີ;
- ໃບອະນຸຍາດອື່ນໆທີ່ກ່ຽວຂ້ອງໃນການສ້າງຕັ້ງວິສະຫະກິດ (ເຊັ່ນ : ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນສິ່ງແວດລ້ອມ, ..);
- ຂໍ້ຕົກລົງແຜນນຳເຂົ້າປະຈຳປີ ຂອງ ຄລທສ ຂັ້ນສູນກາງ (ກະຊວງແຜນການແລະການລົງທຶນ) ຫຼື ຂອງ ຄລທຂ ຂັ້ນທ້ອງຖິ່ນ (ເຈົ້າແຂວງ) ເປັນຜູ້ຕົກລົງອະນຸມັດຕາມກົດໝາຍ.

**3.2. ເຂດເສດຖະກິດພິເສດ ຫຼື ເຂດອື່ນໆຕາມການອະນຸມັດຂອງລັດຖະບານ**

ການນຳເຂົ້າສິນຄ້າ, ເຄື່ອງຂອງ ໂຄງການຕາມນະໂຍບາຍສົ່ງເສີມການລົງທຶນ ໃນເຂດເສດຖະກິດພິເສດ ຫຼື ເຂດ ອື່ນໆ ຕ້ອງປະກອບເອກະສານ ຍື່ນຕໍ່ລັດຖະການພາສີ ເພື່ອພິຈາລະນາ, ຄື :

+ ການນຳເຂົ້າວັດຖຸອຸປະກອນ, ພາຫະນະກົນຈັກຕ່າງໆ ມາຮັບໃຊ້ການກໍ່ສ້າງໂຄງການທີ່ເປັນຊັບສິນບັດຄົງທີ່ :

- ໃບສະເໜີຂອງ ວິສະຫະກິດລົງທຶນ ເຖິງກົມພາສີ ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງ ທີ່ຈະນຳເຂົ້າຜ່ານບັນດາດ່ານພາສີຊາຍແດນ, ທີ່ຕັ້ງໂຄງການ, ເສັ້ນທາງຂົນສົ່ງ, ສາງເກັບມ້ຽນເຄື່ອງຂອງໂຄງການ ແລະ ການນຳໃຊ້ເຂົ້າໃນເປົ້າໝາຍໂຄງການ;
- ບົດວິພາກເສດຖະກິດຂອງວິສະຫະກິດ (ຍື່ນຄັ້ງດຽວ);
- ສັນຍາສຳປະທານ (ຖ້າມີ, ຍື່ນຄັ້ງດຽວ);

- ໃບທະບຽນວິສະຫະກິດ;
- ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;
- ໃບອະນຸຍາດອື່ນໆທີ່ກ່ຽວຂ້ອງໃນການສ້າງຕັ້ງວິສະຫະກິດ (ເຊັ່ນ : ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນສິ່ງແວດລ້ອມ, ..);
- ໃບຢັ້ງຢືນຂອງຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ ຫຼື ເຂດອື່ນໆ;
- ໃບສະເໜີ ແລະ ໃບຢັ້ງຢືນແຜນນໍາເຂົ້າປະຈໍາປີ ຂອງສະພາບໍລິຫານເຂດ;
- ໃບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ຖ້າມີ);
- ໃບມອບສິດ (ຖ້າມີ).

+ ການນໍາເຂົ້າວັດຖຸດິບ, ອຸປະກອນ ມາຮັບໃຊ້ການຜະລິດ ພາຍໃນເຂດ :
- ໃບສະເໜີຂອງ ວິສະຫະກິດລົງທຶນ ເຖິງກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງ ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງ ທີ່ຈະນໍາເຂົ້າຜ່ານບັນດາດ່ານພາສີຊາຍແດນ, ທີ່ຕັ້ງໂຄງການ, ເສັ້ນທາງຂົນສົ່ງ, ສາງເກັບມ້ຽນເຄື່ອງຂອງ ແລະ ການນໍາໃຊ້ເຂົ້າໃນເປົ້າໝາຍ;
- ໃບທະບຽນວິສະຫະກິດ;
- ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;
- ໃບສະເໜີ ແລະ ໃບຢັ້ງຢືນແຜນນໍາເຂົ້າປະຈໍາປີ ຂອງສະພາບໍລິຫານເຂດ;
- ແຜນການຜະລິດ, ຈໍາໜ່າຍ ແລະ ສົ່ງອອກ (ຖ້າມີ);
- ໃບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ຖ້າມີ);
- ໃບມອບສິດ (ຖ້າມີ).

**3.3.** ໂຄງການທີ່ນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫລືອລ້າຈາກຕ່າງປະເທດ

ການນໍາເຂົ້າສິນຄ້າ, ເຄື່ອງຂອງໂຄງການທີ່ນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ຕ້ອງປະກອບເອກະສານ ຍື່ນຕໍ່ລັດຖະການພາສີ ເພື່ອພິຈາລະນາ, ຄື :

- ໃບສະເໜີຂອງໂຄງການ ເຖິງກົມພາສີ ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງ ທີ່ຈະນໍາເຂົ້າຜ່ານບັນດາດ່ານພາສີຊາຍແດນ, ທີ່ຕັ້ງໂຄງການ, ເສັ້ນທາງຂົນສົ່ງ, ສາງເກັບມ້ຽນເຄື່ອງຂອງໂຄງການ ແລະ ການນໍາໃຊ້ເຂົ້າໃນເປົ້າໝາຍໂຄງການ;
- ຂໍ້ຕົກລົງ ອະນຸມັດແຜນນໍາເຂົ້າສິນຄ້າເຄື່ອງຂອງຍົກເວັ້ນ ຫລື ງົດເກັບພາສີ ຂອງລັດຖະມົນຕີກະຊວງການເງິນ;
- ໃບມອບສິດ (ຖ້າມີ).

**3.4.** ສະຖານທູດ ແລະ ອົງການຈັດຕັ້ງສາກົນ :

ການນໍາເຂົ້າສິນຄ້າ, ເຄື່ອງຂອງຮັບໃຊ້ທາງການທູດ ແລະ ອົງການຈັດຕັ້ງສາກົນ ຕ້ອງປະກອບເອກະສານ ຍື່ນຕໍ່ກົມພາສີ ເພື່ອພິຈາລະນາ, ຄື :

- ໃບສະເໜີຂອງສະຖານທູດ ຫລື ອົງການຈັດຕັ້ງສາກົນ ເຖິງກົມພາສີ ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງທີ່ຈະນໍາເຂົ້າຜ່ານບັນດາດ່ານພາສີຊາຍແດນ;
- ສະໂນດນໍາສົ່ງຂອງ ກະຊວງການຕ່າງປະເທດ (ສໍາລັບພາຫະນະ ແລະ ນໍ້າມັນເຊື້ອໄຟ ແມ່ນລັດຖະມົນຕີກະຊວງການຕ່າງປະເທດ ຕົກລົງອະນຸມັດ; ສໍາລັບ ລາຍການສິນຄ້າ, ເຄື່ອງຂອງແມ່ນ ກົມພິທີການທູດ ພິຈາລະນາອະນຸມັດຕາມລະບຽບການ);
- ໃບອະນຸຍາດນໍາເຂົ້າຂອງຂະແໜງການກ່ຽວຂ້ອງ (ປະເພດພາຫະນະ, ນໍ້າມັນເຊື້ອໄຟ);

- ໃບມອບສິດ (ຖ້າມີ).

**3.5. ກໍລະນີການໃຫ້ນະໂຍບາຍອື່ນໆຂອງລັດຖະບານ :**

ການນໍາເຂົ້າສິນຄ້າ, ເຄື່ອງຂອງຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ ທີ່ລັດຖະບານ ເປັນຜູ້ຕົກລົງໃຫ້ນະໂຍບາຍເປັນແຕ່ລະກໍລະນີສະເພາະ, ຕ້ອງປະກອບເອກະສານ ຍື່ນຕໍ່ກົມພາສີ ເພື່ອພິຈາລະນາ ຄື :

- ໃບສະເໜີຂອງຜູ້ນໍາເຂົ້າ ເຖິງກົມພາສີ ເພື່ອແຈ້ງລາຍການສິນຄ້າ, ເຄື່ອງຂອງ ທີ່ຈະນໍາເຂົ້າຜ່ານບັນດາດ່ານພາສີຊາຍແດນ;
- ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ໂດຍຜ່ານ ກະຊວງການເງິນ;
- ໃບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ຖ້າມີ);
- ໃບມອບສິດ (ຖ້າມີ).

## IV. ຂັ້ນຕອນການຈັດຕັ້ງປະຕິບັດ:

**4.1. ກົມພາສີ (ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ)**

ບັນດາໂຄງການສົ່ງເສີມການລົງທຶນຂັ້ນສູນກາງ, ການລົງທຶນໃນເຂດເສດຖະກິດພິເສດ (ການນໍາເຂົ້າຊັບສິນບັດຄົງທີ່), ໂຄງການລົງທຶນຂອງລັດ, ໂຄງການນໍາໃຊ້ທຶນກູ້ຢືມ-ຊ່ວຍເຫຼືອລ້າຈາກຕ່າງປະເທດ, ສະຖານທູດ-ອົງການຈັດຕັ້ງສາກົນ, ການໃຫ້ນະໂຍບາຍອື່ນໆຂອງລັດຖະບານ ໃຫ້ດໍາເນີນຂັ້ນຕອນດັ່ງລຸ່ມນີ້:

- ຜູ້ແຈ້ງພາສີ ຍື່ນແຜນນໍາເຂົ້າ ພ້ອມເອກະສານປະກອບ ໃຫ້ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ເພື່ອກວດກາຂໍ້ມູນໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
- ຜູ້ແຈ້ງພາສີ ປ້ອນຂໍ້ມູນແຜນນໍາເຂົ້າ ລົງໃນລະບົບຄຸ້ມຄອງແຜນນໍາເຂົ້າ. ໃນກໍລະນີ ທີ່ຜູ້ແຈ້ງພາສີ ຫາກບໍ່ສາມາດດໍາເນີນການໄດ້, ກໍ່ໃຫ້ສະເໜີ ເຈົ້າໜ້າທີ່ພາສີ ຜູ້ຮັບຜິດຊອບວຽກງານດັ່ງກ່າວ ຊ່ວຍໃຫ້ຄໍາແນະນໍາໃນການປ້ອນຂໍ້ມູນລົງໃນລະບົບ;
- ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ອອກໃບຢັ້ງຢືນບັນທຶກຂໍ້ມູນລົງໃນລະບົບ ມອບໃຫ້ຜູ້ແຈ້ງພາສີ ເພື່ອເປັນຂໍ້ມູນໃນການແຈ້ງພາສີເປັນລາຍລະອຽດ ທີ່ດ່ານພາສີບ່ອນສິນຄ້ານໍາເຂົ້າ, ພ້ອມນັ້ນກໍ່ໃຫ້ເກັບມ້ຽນສໍາເນົາເອກະສານດັ່ງກ່າວ ໄວ້ທີ່ພະແນກ ເພື່ອເປັນຂໍ້ມູນກວດກາຄືນ.

**4.2. ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ**

ບັນດາໂຄງການສົ່ງເສີມການລົງທຶນຂັ້ນທ້ອງຖິ່ນ, ການລົງທຶນໃນເຂດເສດຖະກິດພິເສດ (ການນໍາເຂົ້າວັດຖຸດິບ, ອຸປະກອນ ມາຮັບໃຊ້ການຜະລິດ ພາຍໃນເຂດ) ໃຫ້ດໍາເນີນຂັ້ນຕອນດັ່ງລຸ່ມນີ້:

- ຜູ້ແຈ້ງພາສີ ຍື່ນແຜນນໍາເຂົ້າ ພ້ອມເອກະສານປະກອບ ໃຫ້ກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງບ່ອນໂຄງການຕັ້ງຢູ່ ເພື່ອກວດກາຂໍ້ມູນໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
- ຜູ້ແຈ້ງພາສີ ປ້ອນຂໍ້ມູນແຜນນໍາເຂົ້າ ລົງໃນລະບົບຄຸ້ມຄອງແຜນນໍາເຂົ້າ. ໃນກໍລະນີ ທີ່ຜູ້ແຈ້ງພາສີ ຫາກບໍ່ສາມາດດໍາເນີນການໄດ້ ກໍ່ໃຫ້ສະເໜີ ເຈົ້າໜ້າທີ່ພາສີ ຜູ້ຮັບຜິດຊອບວຽກງານດັ່ງກ່າວ ຊ່ວຍໃຫ້ຄໍາແນະນໍາໃນການປ້ອນຂໍ້ມູນລົງໃນລະບົບ;
- ກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງ ອອກໃບຢັ້ງຢືນບັນທຶກຂໍ້ມູນລົງໃນລະບົບ ມອບໃຫ້ຜູ້ແຈ້ງພາສີ ເພື່ອເປັນຂໍ້ມູນໃນການແຈ້ງພາສີເປັນລາຍລະອຽດ ທີ່ດ່ານພາສີບ່ອນສິນຄ້ານໍາເຂົ້າ, ພ້ອມນັ້ນກໍ່ໃຫ້ເກັບມ້ຽນສໍາເນົາເອກະສານດັ່ງກ່າວໄວ້ ເພື່ອເປັນຂໍ້ມູນກວດກາຄືນ.

V. ຄວາມຮັບຜິດຊອບຂອງລັດຖະການພາສີແຕ່ລະຂັ້ນ

5.1. ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ :

- ມີໜ້າທີ່ເປັນເສນາທິການ ໃຫ້ຫົວໜ້າກົມພາສີ ໃນການຄົ້ນຄວ້າ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສະຫຼຸບສັງລວມຂໍ້ມູນແບບທົ່ວໄປ ຫຼື ແບບອີເລັກໂຕລນິກ (ລະບົບຄຸ້ມຄອງແຜນນໍາເຂົ້າ) ຂອງບັນດາວັດຖຸ ອຸປະກອນ, ກົນຈັກ, ພາຫະນະ, ນໍ້າມັນເຊື້ອໄຟ ແລະ ອື່ນໆ ທີ່ນໍາເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ ຂອງບັນດາໂຄງການສົ່ງເສີມການລົງທຶນຂັ້ນສູນກາງ ແລະ ທ້ອງຖິ່ນ, ການລົງທຶນໃນ ເຂດເສດຖະກິດພິເສດ, ໂຄງການລົງທຶນຂອງລັດ, ໂຄງການນໍາໃຊ້ ທຶນກູ້ຢືມ-ຊ່ວຍເຫຼືອລ້າຈາກ ຕ່າງປະເທດ, ສະຖານທູດ-ອົງການຈັດຕັ້ງສາກົນ ແລະ ອື່ນໆ.
- ກວດກາຂໍ້ມູນລາຍການສິນຄ້າ ທີ່ໄດ້ຮັບອະນຸຍາດນໍາເຂົ້າຍົກເວັ້ນ, ງົດເກັບ ແລະ ຫຼຸດຜ່ອນ ຕາມລະບຽບ ການ ເພື່ອຄຸ້ມຄອງການປ້ອນຂໍ້ມູນແຜນນໍາເຂົ້າລົງໃນລະບົບຄຸ້ມຄອງແຜນ, ອອກໃບຢັ້ງຢືນ ການບັນທຶກຂໍ້ ມູນເຂົ້າໃນລະບົບ: 03 ສະບັບ, (01 ສະບັບ ສໍາລັບເກັບມ້ຽນສໍານົາ, 01 ສະບັບ ສໍາລັບຜູ້ນໍາເຂົ້າ, 01 ສະບັບ ສໍາລັບດ່ານບ່ອນນໍາເຂົ້າ), ອອກສະໂນດນໍາສົ່ງຂອງພະແນກ ໃຫ້ດ່ານພາສີຊາຍແດນບ່ອນນໍາເຂົ້າ ເປັນຜູ້ຈັດຕັ້ງປະຕິບັດ;
- ສໍາລັບດ່ານພາສີຊາຍແດນ ທີ່ຍັງບໍ່ທັນຕິດຕັ້ງລະບົບຄຸ້ມຄອງແຜນ ມອບໃຫ້ພະແນກເປັນຜູ້ຄຸ້ມຄອງຫັກລົບ ແຜນ ແລະ ອອກໜັງສືລັດຖະການຂອງກົມພາສີ ເພື່ອແຈ້ງໃຫ້ດ່ານພາສີຊາຍແດນບ່ອນນໍາເຂົ້າເປັນຜູ້ຈັດຕັ້ງ ປະຕິບັດ;
- ການລົງທຶນຂັ້ນທ້ອງຖິ່ນ ແລະ ການນໍາເຂົ້າວັດຖຸດິບ, ອຸປະກອນ ມາຮັບໃຊ້ການຜະລິດພາຍໃນເຂດ ເສດຖະກິດພິເສດ ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ຈະປະຕິບັດໜ້າທີ່ມະຫາພາກ ໃນ ການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ຂອງກອງຄຸ້ມຄອງພາສີ, ກອງກວດກາພາສີປະຈໍາແຂວງ ແລະ ດ່ານພາສີຊາຍແດນ.

  ໃນກໍລະນີ ແຜນນໍາເຂົ້າ ທີ່ບັນດາກອງຄຸ້ມຄອງພາສີ, ກອງກວດກາພາສີປະຈໍາແຂວງ ໄດ້ປ້ອນຂໍ້ ມູນລົງໃນລະບົບ ຫາກບໍ່ສອດຄ່ອງຕາມລະບຽບກົດໝາຍ, ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບ ພາສີ ຕ້ອງໄດ້ໂຈະການດໍາເນີນການໄວ້ຊົ່ວຄາວ ແລະ ລາຍງານຫົວໜ້າກົມພາສີທັນທີ ເພື່ອມີວິທີການແກ້ ໄຂ. ຈາກນັ້ນຈຶ່ງອະນຸມັດ ໃຫ້ລະບົບດັ່ງກ່າວ ດໍາເນີນການຫັກລົບແຜນ ເພື່ອແຈ້ງພາສີເປັນລາຍລະອຽດ ຕາມລະບຽບການ;
- ຄຸ້ມຄອງ, ກວດກາຂໍ້ມູນແຜນນໍາເຂົ້າ ທີ່ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ ປ້ອນລົງ ໃນລະບົບ ຕາມການອະນຸມັດຂອງ ຄລທຂ ຂັ້ນທ້ອງຖິ່ນແຂວງໜຶ່ງ ຈະໄປນໍາເຂົ້າຜ່ານດ່ານແຂວງອື່ນ ແລະ ການຂໍປ່ຽນດ່ານນໍາເຂົ້າຕ່າງໆ ໃຫ້ຖືກຕ້ອງ ຕາມລະບຽບການ;
- ຄຸ້ມຄອງ, ກວດກາການສະເໜີຂໍນໍາເຂົ້າພາຫະນະ ແລະ ນໍ້າມັນເຊື້ອໄຟ ຍົກເວັ້ນ, ງົດເກັບ ຫຼື ຫຼຸດຜ່ອນ ເພື່ອນໍາສະເໜີຫົວໜ້າກົມພາສີ ອອກໃບຕິດຕາມການນໍາເຂົ້າ ຕາມລະບຽບການ.

5.2. ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ :

- ມີໜ້າທີ່ເປັນເສນາທິການ ໃຫ້ຫົວໜ້າກົມພາສີ ໃນການຄົ້ນຄວ້າ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສະຫຼຸບສັງລວມຂໍ້ມູນແບບທົ່ວໄປ ຫຼື ແບບອີເລັກໂຕລນິກ (ລະບົບຄຸ້ມຄອງແຜນນໍາເຂົ້າ) ຂອງບັນດາວັດຖຸ ດິບ, ອຸປະກອນ ແລະ ອື່ນໆ ທີ່ນໍາເຂົ້າໃນລະບອບຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ ຂອງບັນດາ ໂຄງການສົ່ງເສີມການລົງທຶນຂັ້ນທ້ອງຖິ່ນ ແລະ ການລົງທຶນໃນເຂດເສດຖະກິດພິເສດ;
- ມີຄວາມຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອງບັນດາດ່ານພາສີ ຊາຍແດນ;

- ກວດກາຂໍ້ມູນລາຍການສິນຄ້າຕາມແຜນນໍາເຂົ້າປະຈໍາປີ ທີ່ ຄລທຂ ຂັ້ນທ້ອງຖິ່ນອະນຸມັດ ເພື່ອດໍາເນີນການປ້ອນຂໍ້ມູນແຜນດັ່ງກ່າວ ລົງໃນລະບົບຄຸ້ມຄອງແຜນ, ອອກໃບຢັ້ງຢືນການບັນທຶກຂໍ້ມູນເຂົ້າໃນລະບົບຄຸ້ມຄອງແຜນ: 03 ສະບັບ, (01 ສະບັບ ສໍາລັບເກັບມ້ຽນສໍານວນ, 01 ສະບັບ ສໍາລັບຜູ້ນໍາເຂົ້າ, 01 ສະບັບ ສໍາລັບດ່ານບ່ອນນໍາເຂົ້າ), ອອກສະໂນດນໍາສົ່ງຂອງກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງ ໃຫ້ດ່ານພາສີຊາຍແດນບ່ອນນໍາເຂົ້າ ທີ່ຂຶ້ນກັບກອງຄຸ້ມຄອງພາສີ ເປັນຜູ້ຈັດຕັ້ງປະຕິບັດ;
- ສໍາລັບດ່ານພາສີຊາຍແດນ ຊຶ່ງຍັງບໍ່ທັນຕິດຕັ້ງລະບົບຄຸ້ມຄອງແຜນ ມອບໃຫ້ກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງ ຄຸ້ມຄອງຫັກລົບແຜນ ແລະ ອອກໜັງສືລັດຖະການ ເພື່ອແຈ້ງໃຫ້ດ່ານພາສີຊາຍແດນບ່ອນນໍາເຂົ້າ ເປັນຜູ້ຈັດຕັ້ງປະຕິບັດ;
- ໃນກໍລະນີແຜນນໍາເຂົ້າທີ່ ຄລທຂ ຂັ້ນທ້ອງຖິ່ນ ຫຼື ສະພາບໍລິຫານເຂດເສດຖະກິດພິເສດ ໄດ້ຮັບຮອງ ຫາກບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ໃຫ້ສັງລວມລາຍງານກົມພາສີ ເພື່ອມີວິທີການແກ້ໄຂ;
- ບັນດາໂຄງການລົງທຶນ ຄລທຂ ຂັ້ນທ້ອງຖິ່ນ ຫຼື ສະພາບໍລິຫານເຂດເສດຖະກິດພິເສດ ທີ່ໄດ້ອະນຸມັດແຜນນໍາເຂົ້າ ຊຶ່ງຈະໄປນໍາເຂົ້າຜ່ານດ່ານ ຫຼື ການຂໍປ່ຽນດ່ານນໍາເຂົ້າ ຢູ່ແຂວງອື່ນ ທີ່ໂຄງການບໍ່ຕັ້ງຢູ່ໃນອານາເຂດຂອງກອງຄຸ້ມຄອງພາສີ, ມອບໃຫ້ກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງດັ່ງກ່າວ ຕ້ອງໄດ້ປະສານ ແລະ ເຮັດໜັງສືສະເໜີ ພ້ອມຄັດຕິດໃບຢັ້ງບັນທຶກຂໍ້ມູນເຂົ້າໃນລະບົບ ແລະ ເອກະສານປະກອບອື່ນ ທີ່ກ່ຽວຂ້ອງ ສົ່ງເຖິງກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈໍາແຂວງ ບ່ອນສິນຄ້າເຄື່ອງຂອງດັ່ງກ່າວ ຈະນໍາເຂົ້າ ເພື່ອປະຕິບັດຕາມລະບຽບການ.

**5.3. ດ່ານພາສີຊາຍແດນ ບ່ອນສິນຄ້ານໍາເຂົ້າ :**

ມອບໃຫ້ບັນດາດ່ານພາສີຊາຍແດນ ຈັດຕັ້ງປະຕິບັດຕາມພາລະບົດບາດ ທີ່ກໍານົດໄວ້ໃນ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 1179/ກພສ, ລົງວັນທີ 15 ມີນາ 2018 ວ່າດ້ວຍໜ້າທີ່ ແລະ ແບບແຜນວິທີເຮັດວຽກຂອງຂະແໜງໃນກອງຄຸ້ມຄອງພາສີ, ໜ່ວຍງານໃນກອງກວດກາພາສີປະຈໍາແຂວງ ແລະ ໜ່ວຍງານຂອງດ່ານພາສີຊາຍແດນ; ບົດແນະນໍາຂອງກົມພາສີ ສະບັບເລກທີ 0097/ກພສ, ລົງວັນທີ 06 ມັງກອນ 2017 ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ; ບົດແນະນໍາຂອງກົມພາສີ ສະບັບເລກທີ 3849/ກພສລົງວັນທີ 13 ມິຖຸນາ 2017 ວ່າດ້ວຍການນໍາໃຊ້ລະບົບຄຸ້ມຄອງແຜນນໍາເຂົ້າສິນຄ້າ, ເຄື່ອງຂອງຍົກເວັ້ນ, ງົດເກັບ ຫຼື ເສຍພາສີຫຼຸດຜ່ອນ ຢ່າງເຂັ້ມງວດ.

**5.4. ການແກ້ໄຂຂໍ້ຜິດພາດ :**

ໃນການກວດກາບັນດາຂໍ້ມູນ ແລະ ເອກະສານແຜນນໍາເຂົ້າຍົກເວັ້ນ, ງົດເກັບ ແລະ ຫຼຸດຜ່ອນພາສີ ຂອງພະແນກ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ ຫາກພົບເຫັນຂໍ້ມູນຫລືເອກະສານປະກອບ ບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ສົງໃສມີການປອມແປງເອກະສານ ແລະ ອື່ນໆ ຫ້າມບໍ່ໃຫ້ປ້ອນຂໍ້ມູນແຜນດັ່ງກ່າວລົງໃນລະບົບຄຸ້ມຄອງແຜນ ຢ່າງເດັດຂາດ ແລະ ໃຫ້ຮີບຮ້ອນສັງລວມລາຍງານຫົວໜ້າກົມພາສີ ເພື່ອມີວິທີການແກ້ໄຂຕາມກົດໝາຍ ແລະ ລະບຽບການ.

## VI. ການນໍາເຂົ້າ-ສົ່ງອອກພາຫະນະ ແລະ ກົນຈັກໜັກ ຊົ່ວຄາວ

1. ການນໍາເຂົ້າຊົ່ວຄາວ ພາຫະນະ ແລະ ກົນຈັກໜັກ ກົມພາສີ (ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ) ເປັນຜູ້ຄຸ້ມຄອງຂໍ້ມູນແຜນນໍາເຂົ້າໃນລະບົບຄຸ້ມຄອງແຜນ, ອອກໃບຢັ້ງຢືນການບັນທຶກຂໍ້ມູນ, ອະນຸມັດສັນຍາຄໍ້າປະກັນການນໍາເຂົ້າຊົ່ວຄາວ ເພື່ອເປັນເອກະສານປະກອບໃນການແຈ້ງພາສີເປັນລາຍລະອຽດ ທີ່ດ່ານພາສີຊາຍແດນບ່ອນນໍາເຂົ້າ.

ໃຫ້ລົບລ້າງການນໍາໃຊ້ ປຶ້ມຕິດຕາມການນໍາໃຊ້ພາຫະນະທີ່ນໍາເຂົ້າຊົ່ວຄາວ ໂດຍໃຫ້ຫັນມານໍາໃຊ້ແຕ່ໃບສັນຍາຄໍ້າປະກັນການນໍາເຂົ້າຊົ່ວຄາວ ເພື່ອຫຼຸດຜ່ອນບັນດາຂັ້ນຕອນ ດ້ານເອກະສານ;

2. ສຳລັບການຕໍ່ອາຍຸການນຳເຂົ້າຊົ່ວຄາວຂອງພາຫະນະ ແລະ ກົນຈັກໜັກ ຜູ້ແຈ້ງພາສີຕ້ອງນຳເອົາສຳນວນເອກະສານໃບແຈ້ງພາສີເປັນລາຍລະອຽດເບື້ອງຕົ້ນ ພ້ອມທັງຄັດຕິດເອກະສານອະນຸຍາດ ໃນການຕໍ່ອາຍຸການນຳເຂົ້າຊົ່ວຄາວ ຂອງຂະແໜງການກ່ຽວຂ້ອງ ແລ້ວຍື່ນຕໍ່ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ ເພື່ອສະເໜີຫົວໜ້າກົມພາສີ ພິຈາລະນາຕາມລະບຽບການ;

3. ການສົ່ງອອກຄືນປະເພດພາຫະນະ ແລະ ກົນຈັກໜັກທີ່ນຳເຂົ້າຊົ່ວຄາວ ມອບໃຫ້ດ່ານພາສີຊາຍແດນບ່ອນສົ່ງອອກ ເປັນຜູ້ຄຸ້ມຄອງກວດກາພາຫະນະຕົວຈິງ, ຫັກລົບຂໍ້ມູນການນາເຂົ້າຊົ່ວຄາວໃນລະບົບຄຸ້ມຄອງແຜນ ແລະ ດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ເພື່ອອະນຸຍາດສົ່ງອອກຄືນຕາມລະບຽບການ;

   ບັນດາເອກະສານທີ່ເປັນ ບ່ອນອີງໃນການຄົ້ນຄວ້າພິຈາລະນາສົ່ງອອກຄືນ ປະກອບມີ, ຄື :

   - ສຳນວນເອກະສານໃບແຈ້ງພາສີເປັນລາຍລະອຽດນຳເຂົ້າຊົ່ວຄາວ;
   - ໃບອະນຸຍາດສົ່ງອອກຄືນ ຫຼື ຂໍ້ຕົກລົງຂອງ ຄລທ ຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ, ສະໂນດນຳສົ່ງຂອງກະຊວງການຕ່າງປະເທດ (ການນຳເຂົ້າສຳລັບສະຖານທູດ ແລະ ອົງການຈັດຕັ້ງສາກົນ);
   - ໃບອະນຸຍາດພາຫະນະອອກນອກປະເທດເລີຍ ຂອງກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ.

4. ສຳລັບການນຳເຂົ້າຊົ່ວຄາວ ແລະ ສົ່ງອອກຄືນ ປະເພດສິນຄ້າ, ເຄື່ອງຂອງທົ່ວໄປ, ວັດຖຸດິບນຳເຂົ້າມາຜະລິດ, ປຸງແຕ່ງໃນລະບົບໂຮງງານອຸດສາຫະກຳ ຫຼື ອື່ນໆ ແມ່ນມອບໃຫ້ດ່ານພາສີຊາຍແດນ ເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບການ.

   ໃນກໍລະນີການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ມອບໃຫ້ດ່ານພາສີຊາຍແດນ ລາຍງານຫົວໜ້າກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີປະຈຳແຂວງ ເພື່ອມີວິທີການແກ້ໄຂ ຕາມລະບຽບການ.

## VII. ການຈັດຕັ້ງປະຕິບັດ

ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ປະສານສົມທົບ, ພົວພັນ ຊຶ່ງກັນແລະກັນ ແນ່ໃສ່ເພື່ອຮັບປະກັນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ສຳເລັດຕາມຄາດໝາຍ, ພ້ອມນັ້ນກໍ່ໃຫ້ຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ ໃຫ້ຜູ້ປະກອບການໄດ້ຮັບຊາບ ແລະ ເຂົ້າໃຈ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

## VIII. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ມິຖຸນາ 2018 ເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

<u>ບ່ອນສົ່ງ</u> :

1. ທ່ານ ລັດຖະມົນຕີ, ຮອງລັດມົນຕີກະຊວງການເງິນ 01 ສະບັບ " ຕາງລາຍງານ "
2. ຫົວໜ້າຫ້ອງການກະຊວງການເງິນ 01 ສະບັບ " ເພື່ອຊາບ "
3. ຄະນະກົມພາສີ 01 ສະບັບ " ເພື່ອຕິດຕາມກວດກາ "
4. ພະແນກການກົມພາສີ 01 ສະບັບ " ເພື່ອປະສານສົມທົບ ແລະ ຈັດຕັ້ງປະຕິບັດ "
5. ກອງຄຸ້ມຄອງພາສີ, ກອງກວດກາພາສີ ແລະ ດ່ານພາສີຊາຍແດນ 01 ສະບັບ " ເພື່ອຈັດຕັ້ງປະຕິບັດ "
6. ເກັບມ້ຽນສຳເນົາ " 01 ສະບັບ "